# ການປິ່ນປົວຮັກສາດ້ວຍຢາໂມໂນໂຄລນັລ ແອນຕິບໍດີແມ່ນຫຍັງ?

ຖ້າທ່ານມີຄວາມສ່ຽງທີ່ຈະເຈັບປ່ວຍຂັ້ນຮຸນແຮງຈາກພະຍາດໂຄວິດ-19 ແລະ ຜົນກວດຫາເຊື້ອໂຄວິດ-19 ເປັນບວກ ຫຼືທ່ານສໍາຜັດໃກ້ຊິດກັບບຸກຄົນທີ່ຕິດເຊື້ອແລ້ວ, ທ່ານອາດຕ້ອງພິຈາລະນາວິທີການຮັກສາປິ່ນ ປົວດ້ວຍຢາໂມໂນໂຄລນັລ ແອນຕິບໍດີ (mAb). ທ່ານອາດມີເງື່ອນໄຂໄດ້ຮັບການປິ່ນປົວຮັກສາດ້ວຍຢາ mAb ເພື່ອປິ່ນປົວຮັກສາພະຍາດ ໂຄວິດ-19 ໂດຍຂຶ້ນກັບອາຍຸ, ປະຫວັດສຸຂະພາບ ຂອງທ່ານ ແລະ ໄລຍະເວລາທີ່ທ່ານມີອາການ.

ການປິ່ນປົວຮັກສາດ້ວຍຢາ mAb ສາມາດຕ້ານໄວຣັດທີ່ເຮັດໃຫ້ເກີດເປັນໂຄວິດ-19 ບໍ່ໃຫ້ເຂົ້າສູ່ຮ່າງກາຍ ແລະ ຈໍາກັດປະລິມານໄວຣັດໃນຮ່າງກາຍຂອງທ່ານ. ນີ້ໝາຍຄວາມວ່າທ່ານອາດມີ ອາການທີ່ບໍ່ຮຸນແຮງ ແລະ ອາດຫຼຸດໂອກາດທີ່ທ່ານຈະຕ້ອງນອນໃນໂຮງໝໍເພື່ອປິ່ນປົວ.

ການປິ່ນປົວຮັກສາດ້ວຍຢາ mAb ອາດຊ່ວຍຄົນຜູ້ທີ່:

- ມີຄວາມສ່ຽງສູງທີ່ຈະເຮັດໃຫ້ອາການຮຸນແຮງຂຶ້ນ **ແລະ**
- ມີຜົນກວດໂຄວິດ-19 ເປັນບວກທີ່ມີອາການບໍ່ເກີນ 7 ມື້ຫຼືໜ້ອຍກ່ວາ **ຫຼື**
- ໄດ້ສໍາຜັດໃກ້ຊິດກັບຜູ້ທີ່ກວດພົບເປັນບວກຢູ່.

## • ຢາໂມໂນໂຄລນັລ ແອນຕິບໍດີແມ່ນຫຍັງ?

ຮ່າງກາຍຂອງທ່ານສ້າງແອນຕິບໍດີຫຼືສານທີ່ຕ້ານກັບພະຍາດຕ່າງໆເພື່ອຕ້ານການຕິດເຊື້ອ. ແນວໃດກໍ ຕາມ ຮ່າງກາຍຂອງທ່ານອາດບໍ່ມີແອນຕິບໍດີທີ່ອອກແບບມາເພື່ອປັບໃຫ້ທັນ ແລະ ຮັບຮູ້ຕໍ່ໄວຣັດສາຍ ພັນໃໝ່ (ກາຍພັນໃໝ່) ເຊັ່ນ SARS-CoV-2 ເຊິ່ງເປັນໄວຣັດທີ່ກາຍພັນມາເປັນໂຄວິດ-19 ນັ້ນເອງ. ຢາ mAb ໄດ້ຮັບການປຸງແຕ່ງຜະລິດໃນຫ້ອງທົດລອງອອກແບບມາເພື່ອຕ້ານກັບ ການຕິດເຊື້ອໂດຍກົງ(ໃນກໍລະນີນີ້, SARS-CoV-2) ແລະ ມອບໃຫ້ທ່ານໂດຍກົງໃນການໃຫ້ຢາ. ຢາ mAb ອາດຊ່ວຍທ່ານໄດ້ຖ້າຫາກທ່ານມີຄວາມສ່ຽງສູງໃນ ກໍລະນີມີອາການຮຸນ ແຮງ ຫຼື ນອນຢູ່ໂຮງໝໍ.

ການໃຊ້ຢາ mAb ເພື່ອປິ່ນປົວຮັກສາໂຄວິດ-19 ແມ່ນແຕກຕ່າງຈາກຢາວັກ ຊີນປ້ອງກັນໂຄວິດ-19. ວັກຊີນກະຕຸ້ນການຕອບສະໜອງພູມຄຸ້ມກັນຕາມທໍາມະຊາດຂອງຮ່າງກາຍ, ແຕ່ການໃຊ້ວັກຊີນແບບນີ້ຍັງໃຊ້ເວລາເປັນອາທິດຂຶ້ນໄປເພື່ອແຊກຊຶມເຂົ້າໃນຮ່າງກາຍເພື່ອຕ້ານກັບ ໄວຣັດ. ດັ່ງນັ້ນ, ຖ້າທ່ານມີເຊື້ອໄວຣັດ ຂໍແນະນໍາເລີຍ ຢາ mAb ສາມາດເຮັດ ໃຫ້ຮ່າງກາຍຂອງທ່ານຕ້ານທານ ແລະປ້ອງກັນໄວຣັດໄປໃນຕົວ. ການປິ່ນປົວຮັກສາດ້ວຍຢາ mAb ບໍ່ໄດ້ໝາຍຄວາມວ່າຈະແທນທີ່ພູມຄຸ້ມກັນຈາກວັກຊີນແຕ່ມັນສາມາດຊ່ວຍໃຫ້ ທ່ານໄດ້ ຖ້າຫາກທ່ານມີໂອກາດຕິດໂຄວິດ-19 ໃນຂັ້ນຮຸນແຮງ.

## • ການປິ່ນປົວຮັກສາດ້ວຍຢາໂມໂນໂຄລນັລ ແອນຕິບໍດີເຮັດ ໃຫ້ຂ້າພະເຈົ້າເຈັບປ່ວຍໄດ້ບໍ່?

ການປິ່ນປົວຮັກສາດ້ວຍຢາໂມໂນໂຄລນັລ ແອນຕິບໍດີ ບໍ່ມີໄວຣັດທີ່ມີຊີວິດ, ສະນັ້ນ ມັນຈຶ່ງບໍ່ມີໂອກາດ ທີ່ຈະເຮັດໃຫ້ທ່ານຕິດເຊື້ອໂຄວິດ-19 ຈາກການໃຊ້ຢາ mAb ນີ້. ຢ່າງໃດກໍ ຕາມ ການປິ່ນປົວຮັກສາດ້ວຍການໃຊ້ແອນຕິບໍດີອາດຍັງມີຜົນຂ້າງຄຽງ. ກະລຸນາປຶກສາກັບຜູ້ໃຫ້ບໍລິການດູແລດ້ານສຸຂະພາບຂອງທ່ານກ່ຽວກັບຜົນຂ້າງຄຽງທີ່ອາດເປັນໄປໄດ້ ແລະ ວິທີການແກ້ໄຂຖ້າ ຫາກທ່ານປະສົບກັບບັນຫາດັ່ງກ່າວ.

## • ຈະເກີດຫຍັງຂຶ້ນຖ້າຫາກຂ້າພະເຈົ້າມີເງື່ອນໄຂບໍ່ພໍທີ່ຈະປິ່ນປົວຮັກສາດ້ວຍຢາໂມໂນໂຄລນັລ ແອນຕິບໍດີນີ້?

ຜູ້ໃຫ້ບໍລິການດູແລດ້ານສຸຂະພາບຂອງທ່ານອາດຕັດສິນແລະບອກວ່າທ່ານບໍ່ສາມາດໃຊ້ຢາ mAb. ອາດ ມີຫຼາຍເຫດຜົນຕໍ່ກັບກໍລະນີແບບນີ້. ທ່ານອາດຈະບໍ່ຖືກຕາມທຸກເງື່ອນໄຂທັງໝົດຫຼືທ່ານອາດມີພາວະ ສຸຂະພາບແຊກຊ້ອນທີ່ເຮັດໃຫ້ທ່ານບໍ່ມີເງື່ອນໄຂພໍທີ່ຈະໃຊ້ຢາ mAb ຊະນິດນີ້. ໃຫ້ຖາມຜູ້ໃຫ້ບໍລິການດູແລ ດ້ານສຸຂະພາບຂອງທ່ານເພື່ອທາງເລືອກອື່ນໆທີ່ຈະຮັກສາປິ່ນປົວຕໍ່ໄປ.

## • ຂ້າພະເຈົ້າສາມາດຮັບຢາໂມໂນໂຄລນັລ ແອນຕິບໍດີໄດ້ແບບ ໃດ?

ຂັ້ນຕອນທີ 1: ຜົນກວດພົບເຊື້ອໂຄວິດ-19 ເປັນບວກ ແລະ ມີອາການບໍ່ເກີນ 7 ມື້ຫຼືໜ້ອຍກ່ວານັ້ນ.

ຂັ້ນຕອນທີ 2: ໄດ້ຮັບການອ້າງອີງຈາກຜູ້ໃຫ້ບໍລິການດູແລດ້ານສຸຂະພາບຂອງທ່ານ.

ຂັ້ນຕອນທີ 3: ຄົ້ນຫາສູນໃຫ້ບໍລິການການໃຫ້ຢາທີ່ສາມາດບໍລິການໄດ້.

ໃນການຮັບຢາ mAb ທ່ານຄວນໄດ້ຮັບການອ້າງອີງເພື່ອປິ່ນປົວຮັກສາຈາກ ຜູ້ໃຫ້ບໍລິການດູແລສຸຂະພາບຂອງທ່ານ ແລະ ເຂົ້າໄປຫາສະຖານທີ່ໃຫ້ບໍລິການການໃຫ້ຢາທີ່ສາມາດບໍລິ ການໄດ້ໂດຍກົງ. **ຖ້າຫາກວ່າທ່ານບໍ່ມີຜູ້ໃຫ້ບໍລິການດູແລສຸຂະພາບ**, ກະລຸນາຕິດຕໍ່ Combat COVID Monoclonal Antibodies Call Center (ສູນບໍລິການຮັບສາຍ ຂອງສູນສະໜອງຢາແອນທິບໍດີຕ້ານພະຍາດ ໂຄວິດ) ໄດ້ທີ່ ເບີໂທ 1-877-332-6585 ເພື່ອຫາຜູ້ທີ່ຈະໂອະ ລົມປຶກສາກ່ຽວກັບອາການ ແລະ ການປິ່ນປົວຂອງທ່ານ.

Washington State Department of Health



ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວ mailto:ecivil.rights@doh.wa.gov.